# ຮຽນເປົ່າແຄນດ້ວຍຕົນເອງ

ຄຳແພວ ພູເພິຊຮລດນທອງ

ແກ່ ລູກສາວ ອໍຮະນະນດ ແລະ
ແກ່ ເກິກນ້ອຍ ລາວ ທູກຄົນ



ສະບິບ ພດເສກ ໓

ຜູ່ຈຳເຫນ່ຍ ຄຳແພວ ພູເພິຊຮລດນທອງ

## ຜາຣິບ

ນາງ ມີ ອາຍຸ ສິບສອງ ປີ ຫລັງຈາກເລີກໂຮງຮຽນມາ ນາງກໍໄປ ຮຽນກິລາ ຮຽນຟ້ອນ ແລະ ຮຽນເປົ່າຂຸ່ຍ (flûte traversière) ມື້ນຶ່ງ ນາງ ໄດ້ໄປເຫັນ ທ່ານ ຄຳພາ ອິນທິສານ ເປົ່າແຄນ ຈຶ່ງໄດ້ບອກພໍ່ວ່າ ນາງຢາກຮຽນເປົ່າແຄນລອງເບິ່ງ ແລະ ພໍ່ແມ່ຂອງນາງຈຶ່ງພາກັນຊື້ແຄນ ມາໃຫ້ ໃນເມື່ອນາງໄດ້ແຄນມາແລ້ວ ບັນຫາອັນໃຫມ່ກໍເກີດຂຶ້ນມາ ຄື ນາງບໍ່ຮູ້ຈັກຈະເປົ່າແຄນ ແນວໃດ ສຽງຂອງມັນຈຶ່ງຈະດັງອອກມາ ຕາມຄວາມຕ້ອງການໄດ້ ເພາະວ່າ ຜູ່ເປັນພໍ່ ໄປ ຊອກຫາ ຊື້ ປຶ້ມ ກ່ຽວກັບ ວິທີຮຽນເປົ່າແຄນບໍ່ໄດ້ ດ້ວຍເຫດນີ້ ຂ້າພະເຈົ້າ ຈຶ່ງຕັດສິນໃຈ ຂຽນຫນັງສືເຫລັ້ມນີ້ຂຶ້ນ ມາ « ເປັນພາສາລາວ » ເຖິງແມ່ນວ່າ ຄວາມຮູ້ພື້ນຖານໃນດ້ານນີ້ ຂອງ ຂ້າພະເຈົ້າ ບໍ່ມີກໍຕາມ ຍ້ອນ ຄິດວ່າ ຄວາມຕ້ອງການຂອງລູກຄົນລາວຜູ່ອື່ນ ກໍອາດຈະຕົກຢູ່ໃນທຳນອງດຽວກັນສັນນັ້ນ

ການຮ່ຳຮຽນແນວໃດກໍຕາມ ຖ້າວ່າ ຜູ່ໃຫຍ່ ຫລື ຜູ່ຮັບຜິດຊອບເດັກ ເຮັດຕົຮຽນໄປພ້ອມກັນ ກັບເດັກ ຫລື ຕົນມີຄວາມສົນໃຈອັນແທ້ຈິງໃນສິ່ງທີ່ລູກຂອງຕົນ ກຳລັງດຳເນີນຢູ່ນັ້ນ ເດັກນ້ອຍ ກໍຈະຮຽນໄປໄດ້ດີກວ່າເກໍຣະນີອື່ນໆ ຫນັງສືນີ້ໄດ້ຂຽນຂຶ້ນເປັນພາສາລາວ ເພື່ອໃຫ້ຜູ່ໃຫຍ່ເຂົ້າໃຈ ເສັ່ງກ່ອນ[1] ການສົນທະນາກັບເດັກນ້ອຍຈຶ່ງຈະສະດວກດີ (ເວົ້າແບບດຽວ ຫລື ເວົ້າພາສາດຽວກັນ)

ຂ້າພະເຈົ້າຂໍອຸທິດຜົນງານອັນນ້ອຍໆອັນນີ້ ແດ່ຜູ່ເປັນພໍ່ເປັນແມ່ທຸກໆຄົນ ທີ່ສົ່ງເສີມລູກຂອງ ຕົນຮຽນເປົ່າແຄນ ແລະແດ່ເດັກທຸກຄົນທີ່ສົນໃຈຊອກສແວງຫາຮຽນເປົ່າແຄນ ອັນເປັນມໍຣະດົກ ຂອງຄົນລາວທຸກຄົນ ແລະ ພ້ອມດຽວກັນນີ້ ຂໍຂອບໃຈນາຍັງຍານາງ ພວງມະນີ ແທວນວົງສົສ ທີ່ພຍາຍາມຊອກຫາຫນັງສື ວິທີຮຽນເປົ່າແຄນຊ່ວຍຂ້າພະເຈົ້າ ແລະ ຂໍຂອບໃຈ ນ້າບ່າວ ພູມີໄຊ ພິມມະນາວ ຜູ່ລົງທຶນຊື້ແຄນຢູ່ເມືອງລາວມາຕ້ອນຫລານສາວຂອງເພິ່ນ

## ຄວາມເປັນມາຂອງແຄນໂດຍສັງເຂບ

ແຄນມີຢູ່ດ້ວຍກັນຫລາຍຊນິດ ແລະ ຖ້າເຮົາຍ່າງຖອຍຫລັງຄືນເຂົ້າໄປໃນເວລາ ເຮົາຈະເຫັນ ໄດ້ວ່າ ຈີນໂບຮານ ແລະ ຍີ່ປຸ່ນໂບຮານ ໄດ້ຈົດຄວາມເປັນມາຂອງແຄນໄວ້ໄດ້ຫລາຍສັຕວັດແລ້ວ ແຕ່ວ່າ ໃນທີ່ນີ້ ຂ້າພະເຈົ້າຈະກ່າວເຖິງພຽງແຕ່ແຄນທີ່ຄົນລາວໃຊ້ຢ່າງດຽວເທົ່ານັ້ນ ແລະ ແຄນ ດັ່ງ ກ່າວນັ້ນ ບໍ່ແມ່ນແຄນແບບອື່ນໃດອີກດ້ວຍ ເພາະວ່າ ແຄນແຕ່ລະຊນິດກໍມີຈຳນວນຄູ່ແຕກຕ່າງ ກັນ ຍ້ອນຄວາມສາມາດຂອງຂ້າພະເຈົ້າກ່ຽວກັບດ້ານນີ້ ບໍ່ພຽງພໍກັບຄວາມຕ້ອງການ ສະນັ້ນ ຈຶ່ງ ຈະເວົ້າເຖິງພຽງແຕ່ແຄນແປດຄູ່ຂັ້ນປະຖົມເທົ່ານັ້ນ ນອກຈາກແຄນແປດຄູ່ນີ້ ກະຣຸນາໃຫ້ທ່ານຜູ່ ສົນໃຈ ໄປຊອກຫາຮຽນຮູ້ຊ່ວຍກັນເພື່ອນຳມາເຜີຍແຜ່ໃຫ້ແກ່ລູກລາວຫລານລາວທຸກຖ້ວນຫນ້າ

## ໂຄງຮ່າງ ຂອງ ແຄນ ແລະ ການສົມມຸດ ຕ່າງໆ

ແຄນແປດຄູ່ ແມ່ນ ແຄນອັນມີຈຳນວນລຳໄມ້ແປດຄູ່ທີ່ເພິ່ນເອົາມາປະກອບເຂົ້າກັນເປັນຄົ້ວ

# ການຮຽນເປົ່າແຄນດ້ວຍຕົນເອງ

ໃຜດົ້ວມັນ ຕາມວິຊາຄວາມຮູ້ພິເສດຂອງຊ່າງແຄນ ແລະ ຊ່າງແຄນແຕ່ລະຄົນກໍຮູ້ຈັກເປົ່າແຄນເປັນທຸກຄົນ ນີ້ ຄື ຈຸດສໍາຄັນຂອງຊ່າງແຄນ

ລໍາໄມ້ທີ່ເພິ່ນເອົາມາເຮັດແຄນນັ້ນມີຫລາຍລໍາ ຫລາຍເລົາ ຫລາຍທໍ່ ຫລື ຫລາຍດົ້ວ ທີ່ຄ້າຍຄືກັນກັບລໍາໄມ້ໄຜ່ນ້ອຍ ຂ້າພະເຈົ້າ ບໍ່ໄດ້ສອບຖາມຫາຊື່ແທ້ຂອງໄມ້ຊນິດນີ້ແຕ່ຢ່າງໃດ ເພາະວ່າມີເວລາຈໍາກັດ ຍ້ອນບໍ່ຢາກໃຫ້ລູກສາວທໍ້ຖອຍກໍາລັງໃຈ ຫລື ປ່ງນໃຈກ່ອນ ຈຶ່ງຈະຂໍໃຊ້ຄໍາ «ດົ້ວ» ໄປກ່ອນ ເພື່ອຊີ້ບອກທໍ່ຕ່າງໆທີ່ເປັນສ່ວນປະກອບອັນສໍາຄັນຂອງແຄນ ການສົມມຸດ ຕ່າງໆ ໃນຫນັງສືເຫລັ້ມນີ້ ຂໍໃຫ້ທ່ານເບິ່ງຕາມຮູບຂ້າງລຸ່ມດັ່ງຕໍ່ໄປນີ້



# ການຮຽນເປົ່າແຄນດ້ວຍຕົນເອງ




ຮູບນາມ ໒

## ຄຳຫມາຍ

- ດ້ວແຕ່ລະດ້ວມີຮູອັນນຶ່ງ ເພື່ອໃຊ້ຜລິດສຽງເຈັດສຽງຕາມ « ໂນ໋ດ » ຂອງແຄນແປດຄູ່
- ດ້ວຈຽງ ຫມາຍເຖິງ ດ້ວນຶ່ງ ຫລື ດ້ວທີນຶ່ງ ແລະ ບາງຄັ້ງ ຈຽງ ຫມາຍເຖິງ ທຳອິດ
- ດ້ວຍີ່ ແມ່ນ ດ້ວທີສອງ ອັນຕາມເປັນຈິງແລ້ວຄຳ ຈຽງ ຍີ່ ສາມ ສີ່ ໆລໆ ຫມາຍເຖິງ ລຳດັບ ເຊັ່ນດຽວກັນກັບ ໄມ້ຈຽງ ໄມ້ຍີ່ ໃນການຮຽນມວຍເສືອນັ້ນເອງ (ຍີ່ສິບ=ສອງສິບ=ຊາວ)
- ການເປົ່າແຄນຕ້ອງເປົ່າສຽງແຕ່ລະສຽງໃຫ້ເປັນຄູ່ກັນໄປ ເຊັ່ນ ສຽງນ້ອຍຄວບກັບສຽງໃຫຍ່

# ການຮຽນເປົ່າແຄນດ້ວຍຕົນເອງ

ສເມີ ຕາມສຽງເຈັດສຽງທີ່ບົ່ງໄວ້ດັ່ງນີ້ ຄື ໂດ[Do] ເຣ[Ré] ມີ[Mi] ຟາ[Fa] ຊອນ[Sol] ລາ[La] ຊີ[Si] ອັນຫມາຍຄວາມວ່າ ຖ້າເຮົາເປົ່າສຽງໃດ ເຮົາຕ້ອງເອົານິ້ວມືຊ້າຍ ແລະ/ຫລື ມືຂວາ ໄປອັດຮູຂອງສຽງຄູ່ນັ້ນໄປພ້ອມໆກັນ ແຕ່ຢ່າລືມວ່າ ສຽງ ລາ ຢູ່ຂ້າງຂວານຳກັນ ແລະ ສຽງ ຟາ ກໍຢູ່ຂ້າງຊ້າຍຂ້າງດຽວກັນ ສ່ວນສຽງອື່ນຈະຢູ່ທັງຂ້າງຊ້າຍແລະຂ້າງຂວາ

– ຮູຂອງດ້ົວແປດ (ດ້ົວທີແປດ) ທີ່ໃຊ້ນີ້ວກ້ອຍອັດ ສ່ວນມາກ ຂ້າພະເຈົ້າບໍ່ສູ້ເຫັນເພິ່ນໃຊ້ ແລະ ເພິ່ນກໍບໍ່ໄດ້ກຳນົດສຽງໃສ່ຮູຂອງດ້ົວແປດນີ້ ຖ້າເຮົາຟັງໃຫ້ດີ ເຮົາຈະໄດ້ຍິນສຽງຄ້າຍໆ ຄືກັນກັບສຽງ ລາ ແລະ ຖ້າເປັນສຽງ ລາ ຄົງເປັນສຽງເສີມຫລາຍກວ່າ (ໃຫ້ເບິ່ງ ແຜງ ມີ)

## ການກຳນົດສຽງ

ສຽງເຈັດສຽງທີ່ເພິ່ນໄດ້ກຳນົດໃສ່ດ້ົວຕ່າງໆຂອງແຄນແປດ ມີຮູບດັ່ງນີ້ (ຮູປນາມ ມີ)

| | | |
|---|---|---|
| C | ໂດ | Do |
| D | ເຣ | Ré |
| E | ມີ | Mi |
| F | ຟາ | Fa |
| G | ຊອນ | Sol |
| A | ລາ | La |
| B | ຊີ | Si |




ຮູປນາມ ມີ




ຮູປນາມ ໔

ສ່ວນການສົມມຸດແບບ « ຫມາກຖົ່ວງອກ[2]» ນັ້ນ ຜິວ່າ ຜູ່ໃດເຄີຍໄດ້ຮຽນ Solfège[3] ຈົ່ງຄ່ອຍພາກັນຂຽນຕາມຫລັກວິທຍາການພາຍຫລັງ ອີກປະການນຶ່ງ ຂ້າພະເຈົ້າ ຂໍຮ້ອງຄຳວ່າ « ງອກ » ແທນຄຳ ໂນ໋ດ[note] ໄປກ່ອນ ຈະຜິດຫລືຖືກປະການໃດ ຈົ່ງຄ່ອຍເວົ້າກັນຕາມທີຫລັງ ແລະ ສິ່ງສຳຄັນແມ່ນການທີ່ເຮົາຄວນສ້າງຂຶ້ນປະໄວ້ເປັນຫລັກ ເພື່ອໃຫ້ພວກລຸ້ນຫລັງນຳໄປສຶກສາກັນ

## ການຊ້ອມ

ການຊ້ອມເປົ່າແຄນ ຕ້ອງເລີ້ມຈາກການຊ້ອມຫລິ້ນ « ງອກ » ກັບໄປກັບມາ ເຫມືອນດັ່ງດຽວກັບການເລີ້ມຫລິ້ນເຄື່ອງດົນຕຣີຕ່າງໆນັ້ນເອງ ຄື ເລີ້ມຫລິ້ນ C D E F G A B C ໄປຕາມລຳດັບດັ່ງການປະກົດດັ່ງກ່າວນີ້ ແລະ ກໍຫລິ້ນ « ງອກ » ກັບຄືນຫລັງໄປອີກດັ່ງນີ້ ຈົນກວ່າວ່າໃຫ້ນີ້ວມືຊ້າຍນີ້ວມືຂວາຂອງຕົນ ສາມາດ ຍ້າຍໄປອັດຮູຂອງດົ໊ວຕ່າງໆ ໃຫ້ໄດ້ຕາມຄວາມຕ້ອງການ

# ການຮຽນເປົ່າແຄນດ້ວຍຕົນເອງ

| | | | |
|---|---|---|---|
| ປ | ໂປ້ | 1 | |
| ຊ | ຊີ້ | 2 | 3 |
| ກ | ກາງ | 4 | 5 |
| ນ | ນາງ | 6 | 7 |
| ກ້ | ກ້ອຍ | 8 | |
| | ນິ້ວ | ດ້ວ | |




ຟາ (F) ສຽງຕ່ຳ ແລະ ຟາ ສຽງສູງ ຢູ່ກ້ຳຊ້າຍ

ຮູປນາມ ໕

ເປົ່າ C D E F G A B C ເສັດແລ້ວມາເປົ່າ C B A G F E D C ດັ່ງການເປົ່າສຽງ ໂດ[Do]

1. ເອົານິ້ວໂປ້ຂອງມືຊ້າຍໄປອັດຮູຂອງ ດ້ວຈຽງ ຫລື ດ້ວທີນຶ່ງ ທີ່ຢູ່ກ້ຳຊ້າຍຂອງແຄນ ແລະ ເອົາ
2. ນິ້ວຊີ້ ຂອງ ມືຂວາ ໄປອັດຮູຂອງ ດ້ວຍີ່ ຫລື ດ້ວທີສອງ ກ້ຳຂວາ (ຮຽບຮ້ອຍ) ແລ້ວກໍໃຫ້
3. ເປົ່າແຄນ ສ່ວນຮູອື່ນໆນັ້ນ ບໍ່ແຕະຕ້ອງມັນ ຫມາຍຄວາມວ່າ ບໍ່ໃຫ້ອັດຮູມັນແຕ່ຢ່າງໃດ

| | C | D | E | F | G | A | B | C | ໃຫ້ເປົ່າ ກັບຄືນ ເມືອຫລັງ |
|---|---|---|---|---|---|---|---|---|---|
| ຊ້າຍ | 1 ປ | 3 ຊ | 4 ກ | 5 ກ / 7 ນ | 6 ນ | ○ | 2 ຊ | 1 ປ | |
| ຂວາ | 2 ຊ | 6 ນ | 7 ນ | ○ | 3 ຊ | 1 ປ / 4 ກ | 5 ກ | 2 ຊ | ແຖວ ໑ |

# ການຮຽນເປົ່າແຄນດ້ວຍຕົນເອງ




ຮູປນາມ ໖

## ຄຳມ້ວນທ້າຍ

ຫລັງຈາກຕົນມີຄວາມສາມາດເປົ່າແຄນໃຫ້ໄດ້ຕາມ « ງອກ » ເຈັດງອກ ດັ່ງທີ່ໄດ້ກ່າວມາແລ້ວນັ້ນ ຈຶ່ງຄ່ອຍຊອກຫາຄວາມເຂົ້າໃຈຕາມທີຫລັງວ່າ ລຳຕັງຫວາຍ ລຳເພີນ ລຳລ່ອງ ລຳເຕີ້ຍ ລຳເຣື່ອງ ລຳຜູ້ໄທ ລຳສາຣະວັນ ລຳມະຫາໄຊ ລຳຄອນສວັນ ແລະ ລຳອື່ນໆ ພ້ອມດ້ວຍການຂັບຕ່າງໆ ທີ່ມີຢູ່ໃນເມືອງລາວ ໃຊ້ສຽງໃດແນ່ ຫລື ໃຊ້ງອກໃດແນ່ ແລະ ຂໍໃຫ້ທ່ານ ຈົ່ງ ພຍາຍາມ ຈົດເປັນ « ຖ່ວງອກ » ໄວ້ວ່າ ລຳອັນໃດເພິ່ນໃຊ້ « ງອກ » ອັນໃດແນ່ ແລະ ທ້ອງນຶ່ງໆມີຈັກຈັງຫວະ (ເວລາ ຫລື ເທື່ອ || Nombre de temps par mesure) ດັ່ງນີ້ເປັນຕົ້ນ

ຖ້າເຮົາຟັງດີໆ ເຮົາຈະສັງເກດໄດ້ວ່າ ເພິ່ນເປົ່າແຄນແບບກ້ຽວໄປໂຽມາຢູ່ບ່ອນເກົ່າຢ່າງນີ້ຕລອດ ມີແຕ່ບ່ອນໃດຫມໍລຳລຳເຍື້ນ ຫມໍແຄນຈຶ່ງເຍື້ນໄປຕາມ ດ້ວຍການປ່ຽນສຽງພຽງເລັກນ້ອຍເທົ່ານັ້ນ

# ການຮຽນເປົ່າແຄນດ້ວຍຕົນເອງ




ຮູປນາມ ໗

# ການຮຽນເປົ່າແຄນກ້ວຍຕົນເອງ




ຮູບພາບ ໘

# ການຮຽນເປົ່າແຄນດ້ວຍຕົນເອງ

**ສລຸບຄວາມ** [ສະ-ຫລຸບ] (ແຕ່ຢ່າເຂົ້າໃຈວ່າ ຫນອງສະ ຫລຸບລົງ)
ຫນັງສືເຫລັ້ມນີ້ ຂຽນຂຶ້ນ ດ້ວຍ ຄົນຕາບອດ ທັງສອງເບື້ອງ ເພາະວ່າ ຂ້າພະເຈົ້າ ບໍ່ຮູ້ຈັກເປົ່າແຄນແມ້ແຕ່ພຽງຫນ້ອຍດຽວ ຍ້ອນຢາກສນອງຄວາມປາຖນາຂອງລູກ ໃຫ້ທັນການ ແລະ ເພື່ອບໍ່ໃຫ້ມັນປຸ່ງນໃຈກ່ອນ ຈຶ່ງ ໄດ້ ພຍາຍາມ[ພະ-ຍາ-ຍາມ] ຂຽນ ເປັນ ລາຍລັກອັກສອນ ຂຶ້ນມາ ປັສຈາກການສຶກສາເອກສານອັນໃດມາກ່ອນເລີຍ ອັນທີ່ບໍ່ກົງກັບຫລັກວິທຍາການ[ວິດ-ທະ-ຍາ] ແບບ « ກົ້ມເບິ່ງແຕ່ຂອງໂຕເອງ » ຫລື ແບບຝຣັ່ງເວົ້າວ່າ « ສາຍຕາບໍ່ກາຍປາຍຮູດັງ »

ຂ້າພະເຈົ້າ ຈະ ພຍາຍາມ ຂຽນ ຫນັງສື ກ່ຽວກັບ ເຣື່ອງນີ້ ໃຫ້ ລະອຽດ ກວ່າເກົ່າ ຕາມໂອກາດ

ເພື່ອ ຄວາມຊົງຈຳ ທ່ານ ຄຳອ້ວນ ຣັຕນະວົງ ຊຶ່ງ ເປັນ ອະດີດ ຣັຖມົນຕຣີ[ລັດ-ຖະ-ມົນ-ຕີ] ແຫ່ງ ພຣະຣາຊອານາຈັກລາວ ໄດ້ຂຽນຫນັງສືກ່ຽວກັບເຣື່ອງເປົ່າແຄນນີ້ມາແລ້ວ ເປັນພາສາຝຣັ່ງ ເມື່ອ ຄ.ສ. ໑໙໗໓ ແຕ່ວ່າ ຂ້າພະເຈົ້າບໍ່ມີຫນັງສືດັ່ງກ່າວ ໃນກຳມືຂອງຂ້າພະເຈົ້າ

ຫນັງສື ເຫລັ້ມນີ້ ຂຽນ ດ້ວຍ ໂປຣແກຣມ « ຣຽບຣຽງ ຫນັງສື [traitement de texte, word processing] » ອັນມີນາມວ່າ OpenOffice « Writer » ຢ່າງດຽວເທົ່ານັ້ນ ຊຶ່ງທ່ານ ສາມາດ ສາກລົງ ມາຈາກບົນ http://fr.openoffice.org ສຳລັບພາສາຝຣັ່ງ ແລະ ສຳລັບ ພາສາອັງກິດຈາກບົນ http://en.openoffice.org ຊຶ່ງເປັນ ໂປຣແກຣມ ທີ່ເຂົາແຈກໃຫ້ ລ້າ ແລະ ຖືກຕ້ອງຕາມກົດຫມາຍອີກດ້ວຍ (download=ສາກລົງ, upload=ສາກຂຶ້ນ)

ຫວັງວ່າ ຫນັງສືເຫລັ້ມນີ້ຄົງເປັນປໂຍດ[ປະ-ໂຫຍດ] ແກ່ລູກ ແລະ ແກ່ທ່ານຜູ່ອ່ານທຸກຄົນ

ເມື່ອວັນທີ ໒໓-໐໓-໒໐໐໗ ເດືອນ ມີນາ ພ.ສ. ໒໕໕໐ ແຫ່ງເມືອງ ປາຣີສ໌ ປະເທດຝຣັ່ງ

ໂດຍ ຄຳແພວ ພູເພັຊຣ໌ລິນທອງ
http://laocom.free.fr

**ລຳຜູ່ໄທ** [ຜູ່-ໄທ (ຢ່າງວ່າ ຜູ່ໄທ ຜູ່ລາວ ຜູ່ເຫັງ(ເຫີງ ຫລື ຂ້າ) ຜູ່ນັ້ນ ຜູ່ນີ້)]
ຕາມ ວິເດໂອ ຂອງ ຫມໍແຄນ (ອາຈານ ບຸນຊຶ່ງ ສີນານົນ) ໄດ້ສລັກຫນ້າຈໍປະໄວ້ວ່າ « ງອກ » ຕອນຕົ້ນ ສຳລັບເປົ່າແຄນໃສ່ກັບ ລຳຜູ່ໄທ ມີດັ່ງນີ້ ຄື D C D F G F A G F D F ແຕ່ບໍ່ຮູ້ວ່າ ເພິ່ນໄດ້ສອນເພີ່ມຕໍ່ໄປອີກຫລືບໍ່ (ພິສູດດ້ວຍ piano ແບບນີ້ C D F G F A G D F A F)

ໃນເມື່ອ ຂ້າພະເຈົ້າ ໄດ້ພົບ « ງອກ » ແນວໃຫມ່ດັ່ງນີ້ ຈຶ່ງໄດ້ຂຽນເພີ່ມເຕີມ ພຽງເລັກນ້ອຍ ແຕ່ບໍ່ໄດ້ຫມາຍຄວາມວ່າ ຈະຂຽນໃຫ້ລະອຽດຕາມທີ່ໄດ້ຂຽນໄວ້ໃນສະບັບທຳອິດກ່ຽວກັບເຣື່ອງນີ້

ເມື່ອວັນທີ ໒໐-໑໐-໒໐໐໘ ເດືອນ ຕຸລາ ພ.ສ. ໒໕໕໑ ແຫ່ງເມືອງ ປາຣີສ໌ ທີ່ປະເທດ ຝຣັ່ງ

# ການແຜງສຽງແຄນເປັນ ຖົ່ວງອກ

## ຖົ່ວງອກ ກັບ ງອກ

ຂ້າພະເຈົ້າ ໄດ້ເລົ່າສູ່ລູກຟັງວ່າ ພໍ່ແມ່ຂອງເດັກທຸກຄົນ ບໍ່ຮູ້ຈັກປາກຄວາມລາວ ແລະ ເດັກຜູ່ທີ່ຢາກຮຽນເປົ່າແຄນຈະບໍ່ສາມາດອ່ານ « ງອກ » ໃນຫນັງສືເຫລັ້ມນີ້ໄດ້ ໃນເມື່ອໄດ້ຍິນດັ່ງນີ້ ລູກຊາຍຫລ້າຜູ່ມີອາຍຸເຈັດປີຂໍສມັກແຜງສຽງເຫລົ່ານີ້ໃຫ້ເປັນ « ຖົ່ວງອກ » ເພື່ອໃຫ້ເດັກນ້ອຍລາວຕ່າງແດນສາມາດອ່ານອອກແລະເຂົ້າໃຈໄດ້ ແຕ່ວ່າຜູ່ກ່ຽວ ຍັງບໍ່ມີຄວາມສາມາດຂຽນເປັນ ຈັງຫວະ ແລະ ເປັນຫ້ອງໃຜຫ້ອງມັນໄດ້ເທື່ອ ດັ່ງ ຖົ່ວງອກ ທີ່ຢູ່ຂ້າງລຸ່ມນີ້




ຮູປນາມ ໙

ການເລົ່າກິຈການຂອງລູກຂຶ້ນມາໃນທີ່ນີ້ ບໍ່ຫມາຍເຖິງການອວດອ້າງອັນໃດໆ ໃນເມື່ອພໍ່ແມ່ ສົນໃຈນຳ ໂຊກຊາຕາ ຫລື ອະນາຄົດ ຂອງລູກ ທ່ານຈະຕ້ອງຮູ້ຈັກວິທີເລົ່າສູ່ລູກຂອງທ່ານຟັງດ້ວຍຄວາມນິ້ມນວນ ເພື່ອໃຫ້ເດັກເກີດມີຄວາມທະເຍີທະຍານ ຢາກມີດີໄດ້ ໃນສິ່ງທີ່ຈະເປັນປໂຍດແກ່ມັນເອງ ປັສຈາກ ການບັງຄັບຂອງຜູ່ເປັນພໍ່ເປັນແມ່ ແລະ ວິທີການເລົ່າຄວນຈະນຳເອົາແຕ່ສິ່ງທີ່ດີມາເລົ່າສູ່ລູກຟັງ ຕົວຢ່າງວ່າ ເດັກນ້ອຍເຈັດປີຍັງເຮັດໄດ້ ລູກຂອງເຮົາກໍສາມາດເຮັດໄດ້ເຫມືອນກັນຄັນທ່ານຮູ້ຈັກໃຫ້ກຳລັງໃຈມັນ ຖ້າວ່າ ຂາດນ້ຳຢາອັນນີ້ແລ້ວ ຈະເກັ່ງປານໃດກໍຄົງຈະເຮັດຫຍັງບໍ່ຂຶ້ນບໍ່ເກີນ (ນ້ອຍໃຫຍ່ກໍເຫມືອນກັນ / ຜູ່ນຶ່ງດຶງເມືອຮູ ຜູ່ນຶ່ງຖູເມືອຖ້ຳ ຄູ່ນັ້ນບໍ່ກ້າວຫນ້າ)

ເລົ່າສິ່ງທີ່ດີສູ່ລູກຟັງ ເອີ້ນວ່າ ສິ່ງທີ່ ຫລື ການທີ່ ຈະຊັກຊວນໃຫ້ເດັກເກີດມີສະຕິປັນຍາຂຶ້ນແກ່ຕົວຂອງມັນ

ການບັງຄັບ ຈະພາໃຫ້ຜູ່ຖືກບັງຄັບ ເກີດຄວາມເບື່ອຫນ່າຍຫລາຍຂຶ້ນ ຜິວ່າ ການສອນລູກ ບໍ່ຕົກຢູ່ໃນກໍຣະນີການບັງຄັບ ຜູ່ເປັນພໍ່ແມ່ ຕ້ອງພຍາຍາມຊອມການດຳເນີນຂອງເດັກ ຢ່າງທີ່ບໍ່ໃຫ້ມັນຮູ້ສຶກຕົວວ່າມັນຖືກຊອມ ການຄອບຄຸມແບບນີ້ແມ່ນເອົາສະຕິປັນຍາຄອບຄຸມ ເຫມືອນດັ່ງດຽວກັນກັບນັກລ່າຫົວເມືອງຂຶ້ນ ທີ່ເຂົ້າມາຄອບຄອງລາວ ເພື່ອດັບລາວແລະເພື່ອກືນກິນລາວ ຢ່າງດຽວເທົ່ານັ້ນ (ເຂົາເຮັດງຽບໆ ເພື່ອບໍ່ໃຫ້ເຮົາຮູ້ສຶກຕົວ)

**ຍ້ອນເຫັນວ່າ ເດັກນ້ອຍລາວມີປັນຍາດີຕອນຍັງນ້ອຍ ແຕ່ເປັນຫຍັງ ເຂົາຈິ່ງຮຽນໄປບໍ່ໄກ?**

## ການແຜງສຽງແຄນເປັນຖົ່ວງອກ

ໝໍແຄນ ບຸນຊົ່ງ ສີນານົນ ສອນວິທີເປົ່າແຄນຂັ້ນຕົ້ນ ສຳລັບລຳຜູ້ໄທ ຕາມ ງອກ ຂ້າງລຸ່ມນີ້




ຮູບນາມ ໙

ສຽງຕ່າງໆ ທີ່ຂຽນເປັນ «ຖົ່ວງອກ» ຂ້າງເທິງນີ້ (ຮູບນາມ ໙) ຈະບໍ່ກົງກັບໂຄງຮ່າງຂອງແຄນ ແຕ່ຢ່າງໃດ ເພາະວ່າ ການເປົ່າແຄນຈະຕ້ອງເປົ່າເປັນຄູ່ກັນໄປສເມີ ແລະ ຄູ່ດັ່ງກ່າວນັ້ນແມ່ນຄູ່ຂອງ ສຽງອັນທີ່ໝໍແຄນ ບຸນຊົ່ງ ບອກວ່າ « ສຽງນ້ອຍ ແລະ ສຽງໃຫຍ່[4]» ເຊັ່ນ ສຽງໂດນ້ອຍ ຕ້ອງເປົ່າ ຄວບກັນກັບ ສຽງໂດໃຫຍ່ ແຕ່ຫາກວ່າ « ສຽງນ້ອຍ » ຈະບໍ່ຢູ່ຂ້າງຊ້າຍສເມີໄປ[ສະ-ເໝີ] ແລະ ສຽງໃຫຍ່ ກໍເປັນເຊັ່ນດຽວກັນ ສະນັ້ນ «ຖົ່ວງອກ» ຂ້າງເທິງນີ້ (ຮູບນາມ ໙) ຈະໃຊ້ການບໍ່ໄດ້ ດັ່ງໃຈມັກ ດ້ວຍເຫດນີ້ ເຮົາຄວນສຶກສາ ໂຄງຮ່າງ ຂອງ ແຄນ ໃຫ້ຖນັດດີກວ່ານີ້ [ຖະ-ໜັດ]

## ບ່ອນຢູ່ຂອງສຽງແຄນແປກ

| ງອກ | C | D | E | F | | G | A | | B |
|---|---|---|---|---|---|---|---|---|---|
| ກົ້າຊ້າຍ | ນ 1 | ຫຍ 3 | ຫຍ 4 | ຫຍ 5 | ນ 7 | ຊໍ່າກັນ 6 | (ບໍ່ມີ) | | ຫຍ 2 |
| ກົ້າຂວາ | ຫຍ 2 | ນ 6 | ນ 7 | (ບໍ່ມີ) | | ຊໍ່າກັນ 3 | ຫຍ 1 | ນ 4 | ນ 5 |

ແຜງ ໔

ຫຍ : ໃຫຍ່ (ສຽງທີ່ສົມມຸດເປັນສຽງໃຫຍ່)
ນ : ນ້ອຍ (ສຳລັບສຽງທີ່ສົມມຸດເປັນສຽງນ້ອຍ)
ຊໍ່າກັນ : ສຽງຂອນ ມີສຽງຊໍ່າໆກັນ (ສຽງຂ້າງຊ້າຍຫລຸດສຽງຂ້າງຂວາພຽງຫນ້ອຍດຽວ)
ນ 1 : ເລກທີ່ຢູ່ຂ້າງລຸ່ມຕົວຫນັງສືນັ້ນ ຫມາຍເຖິງ ລຳດັບ ຂອງ ກົ້ວແຄນ

ອີງຕາມແຄນຂອງຂ້າພະເຈົ້າ « ສຽງນ້ອຍ ແລະ ສຽງໃຫຍ່ » ແຈກຢາຍກັນຢູ່ຢ່າງນີ້ (ແຜງ ໔) ແຕ່ບໍ່ຮູ້ວ່າ ແຄນດວງອື່ນໆຈະມີໂຄງຮ່າງແບບດຽວກັນຫລືບໍ່ ເພາະວ່າ ຂ້າພະເຈົ້າບໍ່ໄດ້ພິສູດແຄນ ດວງອື່ນ ເພື່ອໃຫ້ຮູ້ດ້ວຍຄວາມແນ່ນອນວ່າ ບ່ອນຢູ່ ຂອງ « ສຽງນ້ອຍສຽງໃຫຍ່ » ໃນແຄນດວງ

# ຈາສຽງແຄນແປກ

ອື່ນໆນັ້ນ ຈະແຈກຢາຍກັນຢູ່ແບບດຽວກັນກັບແຄນຂອງຂ້າພະເຈົ້າສເມີໄປຫລືບໍ່ ຖ້າບໍ່ດັ່ງນັ້ນ ເຮົາຈະບໍ່ສາມາດຊຽນ « ຖົ່ວງອກ » ໃຫ້ຕາຍຕົວໄດ້ ຍ້ອນວ່າ « ງອກ » ຂອງ ໂດ ສຽງນ້ອຍ ແຕກຕ່າງກັນກັບ « ງອກ » ຂອງ ໂດ ສຽງໃຫຍ່ ແລະ « ງອກ » ສຳລັບສຽງອື່ນໆກໍເປັນເຊັ່ນດຽວກັນອີກປະການນຶ່ງ ໂດ ໃນແຄນຂອງຂ້າພະເຈົ້າ ສຽງນ້ອຍ ຢູ່ກົ້າຊ້າຍ ແລະ ໂດ ສຽງໃຫຍ່ ຢູ່ກົ້າຂວາ (ແຜງ ໔) ແລະ ການຊຽນ « ຖົ່ວງອກ » ຕ້ອງຊຽນສຳລັບມືຊ້າຍແລະມືຂວາໄປພ້ອມໆກັນ ເພາະວ່າ ການເປົ່າແຄນ ຕ້ອງໃຊ້ນິ້ວມືສອງນິ້ວ ອັດຮູຂອງສຽງແຕ່ລະສຽງ ຄວນເປັນຄູ່ກັນໄປສເມີ

ຝີວ່າ ການສ້າງແຄນໃຫ້ມີຫລັກມາຕຖານເປັນຢ່າງດີ ແລະ ໃຫ້ມີໂຄງຮ່າງແບບດຽວກັນ ແຄນລາວ ຈະເຜີຍແຜ່ແລະຂຍາຍອອກໄປທົ່ວໂລກ ເພາະວ່າ ຫມໍແຄນທັງຫລາຍທັງປວງ ຈະ ສາມາດເປົ່າແຄນໃສ່ ປີອາໂນ[piano] ຫລື ເປົ່າຫລິ້ນປົນກັນກັບເຄື່ອງດົນຕຣີ ຊນິດ ອື່ນໆ ໄດ້ດີ ແລະເພື່ອໃຫ້ນັກແຕ່ງລຳແຕ່ງເພງ ສາມາດຊຽນເປັນ «ງອກ» ອອກມາໄດ້ ມັນຈຶ່ງບໍ່ສູນເສັຽໄດ້ງ່າຍດາຍ

ການຜລິດແຄນ ໃຊ້ພຽງແຕ່ເຄື່ອງວັດແທກສຽງ ດີອາປາຊົງ[diapason][5] ແນວດຽວ ກໍພຽງພໍກັບຄວາມຕ້ອງການ ແລະ ໂຄງຮ່າງຂອງແຄນ ຕ້ອງໃຫ້ຢູ່ແບບດຽວກັນຫມົດທຸກໆດວງ ແຕ່ຢ່າລືມວ່າ ນັກທ່ອງທ່ຽວທີ່ຈະມາ « ເອຊຽນເກມ[6] » ໃນຫມໍ່ໆນີ້ຢູ່ເມືອງລາວ ຈະຊື້ແຄນຫລາຍທີ່ສຸດ

## ການວັດແທກສຽງແຄນແປກ

| ລຳດັບດົ້ວ | 1 | 2 | 3 | 4 | 5 | 6 | 7 | 8 |
|---|---|---|---|---|---|---|---|---|
| ກົ້າຊ້າຍ | C(-48) | B(-37) | C#(42) | Eb(48) | E(25) | G(-40) | F(-35) | G(-25) |
| | C | B | D | E | F | G | F | |
| ກົ້າຂວາ | G#(10) | B(25) | F#(35) | G#(27) | Bb(35) | D(-47) | Eb(20) | G#(35) |
| | A | C | G | A | B | D | E | |

ແຜງ ມ

ສຽງ ລາ[La][7] ສາມ ຫລື ລາທີສາມ ມີ ໔໔໐ ເຫີກ[Hertz] ຫລື ໔໔໐ ບາດ(ຕີ) ຕໍ່ ວິນາທີ ອີງຕາມມະຕິ (ການສົມມຸດ) ຂອງກອງປະຊຸມແຫ່ງເມືອງ ລອນດອນ ເມື່ອ ປີ ໑໙໓໙ ແຕ່ວ່າ ກອງປະຊຸມແຫ່ງເມືອງ ວຽນນາ (Vienne) ເມື່ອ ຄ.ສ. ໑໘໘໕ ໄດ້ລົງມະຕິໃສ່ ໔໓໕ Hz ສ່ວນການໃຊ້ສຽງ ລາ ເປັນຫລາຍການໃນທຸກປະເທດນັ້ນແມ່ນ ໔໔໐ Hz ດ້ວຍເຫດນີ້ ທ່ານສາມາດສັງເກດເຫັນສີ່ຕ່າງໆຂ້າງເທິງນີ້ (ແຜງ ມ) ບໍ່ກົງກັນກັບສຽງ ທີ່ເພິ່ນຫມາຍໃສ່ຢູ່ແຄນ ແລະ ຜົນຂອງການວັດແທກສຽງ ລາ[La] ທີ່ຢູ່ກົ້າຂວາຂອງແຄນເປັນສຽງ ຊອນ G#10 ແລະ ຊອນ G#27 ແທນທີ່ຈະເປັນ A#10 ແລະ A#27 ຊຶ່ງເລກ ໑໐ ແລະ ໔໗ ແມ່ນຖ້າມຫລືຄວາມຫ່າງໄກ ຈາກ

# ການວັດແທກສຽງແຄນ

ເລກສູນ ອີງຕາມເຄື່ອງວັດແທກຂ້າງລຸ່ມນີ້ ($G^{\#}=A^{b}$ | $E^{\#}=F$ | $F^{b}=E$ | $B^{\#}=C$ | $C^{b}=B$)




ຮູບນາມ ໑໐

(ສຽງໃຫຍ່ແທ້ໆ ເຂັມຈະຈັ້ງຢູ່ເລກສູນ ຄື ຢູ່ເຄິ່ງກາງ) ຕາມເຄື່ອງວັດແທກທີ່ຂ້າພະເຈົ້າໃຊ້ແທກສຽງແຄນ (ຮູບນາມ ໑໐) ວິທີແທກນັ້ນ ຂ້າພະເຈົ້າເອົາແຄນມາເປົ່າເທື່ອລະດົ້ວ ເລີ້ມຈາກ ດົ້ວຈຽງ ໄປຫາ ດົ້ວແປດ ຂອງທັງສອງກ້ຳ ແລະ ພ້ອມດຽວກັນນັ້ນ ກໍໄດ້ຈົດຜົນຂອງການວັດແທກ ແຕ່ລະເທື່ອ (ແຜງ ມີ) ຈຶ່ງໄດ້ຮູ້ວ່າ ສີ່ເຫລົ່ານີ້ບໍ່ກົງກັບສຽງ «ງອກ» ທີ່ເພິ່ນໄດ້ຂຽນວາງໄວ້ຕາມດົ້ວຕ່າງໆຂອງແຄນ ເຊັ່ນ ໂດ ເຣ ມີ ຟາ ຊອນ ລາ ຊີ ອີກປະການນຶ່ງ ສຽງທີ່ຫມໍແຄນເວົ້າວ່າ « ສຽງນ້ອຍ ສຽງໃຫຍ່ » ກໍບໍ່ກົງກັບສຽງຂອງ ງອກ « ສາກົນ » ແຕ່ຢ່າງໃດ ເພາະວ່າ ສຽງດຽວກັນ ຕ້ອງຫ່າງກັນ (ມີຖ້ານ) ອັອກຕາວນຶ່ງ [octave] ແລະ ຂ້າພະເຈົ້າຮູ້ຈັກສຽງຂອງດົ້ວແປດທັງສອງກ້ຳ ຍ້ອນການວັດແທກ

ຜົວ່າ ເຮົາຮູ້ຈັກ ສຽງແຄນແຕ່ລະສຽງ ດ້ວຍຄວາມແນ່ນອນ ແລະ ຖືກຕ້ອງຕາມຫລັກສາກົນ ເຮົາກໍສາມາດເຮັດແຄນໄດ້ເຊັ່ນດຽວກັນ ເຖິງແມ່ນວ່າ ເຮົາບໍ່ຮູ້ຈັກເປົ່າແຄນເປັນກໍຕາມ ພຽງແຕ່ເປົ່າເທື່ອລະດົ້ວໄປ ເພື່ອພິສູດການວັດແທກສຽງ (ຫລື ມ້າງແຄນອອກ ເພື່ອການສຶກສາ)

## ການເຮັດແຄນ

ແຄນຄວນມີສາມຂນາດ[ຂະ-ຫນາດ] ດ້ວຍກັນ ຄື ແຄນຂນາດນ້ອຍ ສຳລັບເດັກນ້ອຍໃຊ້ ແຄນຂນາດກາງ ແລະ ແຄນຂນາດໃຫຍ່ ສຳລັບຄົນທົ່ວໄປ ຈະເປັນແຄນຊນິດຫລາຍຄູ່ເທົ່າໃດກໍຕາມ ຂນາດບໍ່ໄດ້ຫມາຍເຖິງຈຳນວນຄູ່ຂອງດົ້ວແຄນ ແຕ່ແມ່ນລວງຍາວຂອງແຄນແຕ່ລະດວງທີ່ຈະເຮັດອອກມາຄວນໃຫ້ມີລວງຍາວອັນດຽວກັນທັງສິ້ນ ແລະ ຕ້ອງໃຫ້ ໂຄງຮ່າງ ຂອງມັນເປັນແບບດຽວກັນອີກດ້ວຍ ຫມາຍຄວາມວ່າ « ສຽງໃຫຍ່ » ທັງເຈັດຕ້ອງໃຫ້ຢູ່ດົ້ວເກົ່າສເມີ ແລະ « ສຽງນ້ອຍ » ທັງເຈັດກໍຕ້ອງໃຫ້ຢູ່ດົ້ວເກົ່າລຳດັບເກົ່າຕລອດ [ຕະ-ຫລອດ] ແລະ ສຽງທຸກໆສຽງກໍໃຫ້ຖືກຕ້ອງຕາມຫລັກວິທຍາສາດ ຄື ສຽງ ລາໃຫຍ່[La] ຕ້ອງແມ່ນ ໔໔໐ Hz ດັ່ງນີ້ເປັນຕົ້ນ

ຜູ່ເຮັດລີ້ນແຄນສຽງໃດ ກໍໃຫ້ເຮັດແຕ່ລີ້ນແຄນສຽງນັ້ນໂດຍສະເພາະ ແລະ ໃຫ້ຖືກຕ້ອງຕາມຂນາດ ຫລື ຕາມຄຳສັ່ງຂອງຫົວຫນ້າ ສ່ວນວ່າ ຜູ່ຜລິດແນວອື່ນກໍໃຫ້ເຮັດແຕ່ແນວດຽວນັ້ນໃຫ້ໄດ້ດີສຸດຄວາມສາມາດ ການຜລິດເຄື່ອງປະກອບຕ່າງໆຂອງແຄນ ກໍຄວນເຮັດໃຫ້ໄດ້ຈຳນວນຫລາຍເທົ່າທີ່ຈະຫລາຍໄດ້ບາດດຽວໂລດ ຫລັງຈາກນັ້ນ ເຮົາຈຶ່ງເອົາເຄື່ອງຕ່າງໆມາປະກອບເຂົ້າກັນ ເສັດແລ້ວຈຶ່ງທຳການພິສູດວັດແທກສຽງແຕ່ລະສຽງ ເພື່ອໃຫ້ເຂົ້າກັບຄຸນພາບທີ່ຕົນໄດ້ບົ່ງໄວ້

ການຜລິດວິທີນີ້ ຈະເຮັດໄດ້ໄວກວ່າ ແລະ ຈະເຮັດໄດ້ຈຳນວນຫລາຍກວ່າການເຮັດແຄນດວງໃຜດວງມັນ ຄຸນພາບ[ຄຸນ-ນະ-ພາບ] ຂອງແຄນກໍຈະດີຂຶ້ນສເມີ ແລະ ຄວາມຮູ້ກໍຈະເພີ່ມຂຶ້ນນັບມື້

# ການຄ້າຂາຍແຄນຢູ່ລາວ

ມີ ເອຊຽນເກມ[Asian games] ຢູ່ເມືອງລາວ ຕ້ອງມີນັກທ່ອງທ່ຽວຫລາຍ ແລະ ນັກທ່ອງທ່ຽວ ກໍຈະຊື້ແຄນຫລາຍ ສະນັ້ນ ຄົນລາວ ຄວນວາງແຜນຊອກຫາວິທີປູກ ຕົ້ນໄມ້ ຫລື ພືດ ທີ່ໃຊ້ເຮັດແຄນ ແລະ ຕ້ອງໃຫ້ຮູ້ວ່າ ການປູກພືດຊນິດນີ້ຈະໃຊ້ເວລາ ຈັກເດືອນ ຫລື ຈັກປີ ຈິ່ງຈະໃຊ້ເຮັດແຄນໄດ້ ຖ້າຈະແນໃສ່ການຂາຍແຄນໃຫ້ທັນເວລາກັບຊ້ວງລະຍະ ເອຊຽນເກມ ທີ່ຈະມາເຖິງນີ້

ຕົວຢ່າງການຜລິດ ຂຸ່ຍຍາວ ສຳລັບເປົ່າທາງຂວາງ (flûte traversière) ເຂົາເຮັດດ້ວຍ ແຜ່ນເງິນ ເຮົາມາລອງຄິດເບິ່ງວ່າ ຖ້າເຮັດແຄນດ້ວຍໂລຫະເງິນຈະມີຄວາມເບົາດີບໍ ແລະ ຈະຕົກເປັນຣາຄາເທົ່າໃດ?

## ການຄ້າຂາຍແຄນ

ຫນັງສືນີ້ບໍ່ແມ່ນຫນັງສືບອກວິທີເຮັດແຄນ ຫລື ບອກວິທີຄ້າຂາຍແຕ່ປະການໃດ ເປັນພຽງແຕ່ຄວາມຄິດສ່ວນຕົວຂອງຄົນລາວຜູ່ນຶ່ງຕ່າງຫາກ ຊຶ່ງຜົນສະທ້ອນອັນໃດ ຜູ່ນຳໃຊ້ຮັບຜິດຊອບເອງ

ຖ້າໄລ່ສະເລັ່ງແລ້ວ ຂ້າພະເຈົ້າ ບໍ່ຮູ້ຈັກວ່າ ການເຮັດແຄນດວງນຶ່ງໆຈະໃຊ້ເວລາຫລາຍປານໃດເຖິງຢ່າງໃດກໍດີ ຫນັງສືນີ້ຂຽນຂຶ້ນ ເພື່ອໃຫ້ຄົນລາວຢູ່ເມືອງລາວມີຄວາມຄິດຕື່ມຂຶ້ນໃນການຜລິດຄິດແຕ່ງ ແລະ ໃນການຊອກຫາຣາຍໄດ້ ເພີ່ມເຕີມເຂົ້າສູ່ ຄອບຄົວ ຂອງຕົນ

ການຂາຍແຄນ ບໍ່ແມ່ນຈະຂາຍແຕ່ແຄນຢ່າງດຽວເທົ່ານັ້ນ ຍັງມີກັບອັນງາມໆ ເພື່ອໃສ່ແຄນນຳອີກ ແລະກັບແຕ່ລະກັບ ຕ້ອງໃຫ້ມີຄຸນພາບແຕກຕ່າງກັນ ເພື່ອສນອງຄວາມຕ້ອງການລູກຄ້າໃຫ້ແຂ້າກັບຖົງເງິນຂອງເຂົາເຈົ້ານັ້ນເອງ ສະນັ້ນ ການເຮັດແຄນ ຈຳເປັນຕ້ອງໃຫ້ຢູ່ໃນຂນາດຂອງມາຕຖານການຢ່າງດຽວກັນທັງສາມຂນາດ ກັບໃສ່ແຄນຕ່າງໆມີຫນ້າທີ່ປ້ອງກັນບໍ່ໃຫ້ເລົາແຄນແຕກ ແລະ ບໍ່ໃຫ້ແມງໄມ້ເຂົ້າໄປລີ້ຊ່ອນຢູ່ໃນນັ້ນ ນີ້ ຄື ປະຖົມຂໍ້ມູນສຳລັບຄົນສາມັນທັມມະດາ

| ຣາຄາຂາຍແຄນ | ຈຳນວນ | 25 $ | 30$ | 35 $ | 40 | 45 | 50 |
|---|---|---|---|---|---|---|---|
| ມື້ນຶ່ງ ຂາຍໄດ້ | 5 | 125 | 150 | 175 | 200 | 225 | 250 |
| ມື້ສອງ | 10 | 250 | 300 | 350 | 400 | 450 | 500 |
| ມື້ສາມ | 12 | 300 | 360 | 420 | 480 | 540 | 600 |
| ມື້ສີ່ | 32 | 800 | 960 | 1 120 | 1 280 | 1 440 | 1 600 |
| ... ມື້ສຸດທ້າຍ | 50 | 1 250 | 1 500 | 1 750 | 2 000 | 2 250 | 2 500 |
| ຣວມທັງຫມົດ | 109 | 2 725 | 3 270 | 3 815 | 4 360 | 4 905 | 5 450 |

ແຜງ ໔

# ການກໍານົດລາຄາຂັ້ນປະຖົມ

ການສົມມຸດຂ້າງເທິງນີ້ (ແຜງ ໔) ໃຫ້ຍົກເອົາຕົວຢ່າງຂອງລາຄາຂາຍແຄນ ລາຄານຶ່ງລາຄາດຽວເທົ່ານັ້ນ ແຕ່ການສົມມຸດລາຄາຂາຍ ຕ້ອງໃຫ້ມີກໍຣະນີຫລາຍອັນ ເພື່ອການຂຍາຍຄວາມຄິດ ສ່ວນການສົມມຸດຈໍານວນຂາຍແຕ່ລະມື້ນັ້ນ ໃຫ້ພໍ່ຄ້າແມ່ຄ້າເປັນຜູ້ກະຕວງເອົາເອງ ເພາະວ່າ ທ່ານເປັນຄົນທ້ອງຖິ່ນ ແລະ ທ່ານຄວນຮູ້ຫລືຄົງຮູ້ວັທນະທັມທ້ອງຖິ່ນດີກວ່າຄົນອື່ນ [ວັດ-ທະ-ນະ-ທໍາ]

ຕາມກໍຣະນີສົມມຸດຂ້າງເທິງນີ້ (ແຜງ ໔) ຄື ຖ້າເຮົາຂາຍແຄນ

- ໄດ້ຈໍານວນທັງຫມົດ 109 ດວງໃນລະຍະຊ້ວງ ເອຊຽນເກມ ແລະ
  - ດວງລະ 25 ດອນລາ ເຮົາຈະມີ ລາຍໄດ້ ທັງຫມົດ 2 725 $ ຫລື
  - ດວງລະ 30 ດອນລາ ເຮົາຈະມີ ລາຍໄດ້ ທັງຫມົດ 3 270 $ ຫລື
  - ດວງລະ 35 ດອນລາ ເຮົາຈະມີ ລາຍໄດ້ ທັງຫມົດ 3 815 $ ຫລື
  - ດວງລະ 40 ດອນລາ ເຮົາຈະມີ ລາຍໄດ້ ທັງຫມົດ 4 360 $ ຫລື
  - ດວງລະ 45 ດອນລາ ເຮົາຈະມີ ລາຍໄດ້ ທັງຫມົດ 4 905 $ ຫລື
  - ດວງລະ 50 ດອນລາ ເຮົາຈະມີ ລາຍໄດ້ ທັງຫມົດ 5 450 $

ໃນເມື່ອເຮົາຮູ້ຈັກຕົວຢ່າງຂອງ ລາຄາຂາຍ ມາແລ້ວ ສິ່ງສໍາຄັນທີ່ສຸດທີ່ເຮົາຄວນຮູ້ ຄື ລາຍຈ່າຍທັງຫມົດ ຂອງ ແຕ່ລະເດືອນ ແຕ່ລະທິດ ແຕ່ລະມື້ ແລະ/ຫລື ແຕ່ລະໂຄງການ ໃນຊ້ວງລະຍະເວລາຈໍາກັດ ເພື່ອໃຫ້ເຮົາຮູ້ວ່າລາຄາທີ່ເຮົາຕ້ອງການຂາຍນັ້ນ ຊຶ່ງເປັນລາຄາທີ່ລູກຄ້າ "ທັມມະດາ" ສາມາດຊື້ໄດ້ (ຍ້ອນຈໍານວນຄົນທີ່ມີເງິນເດືອນຢູ່ເມືອງລາວບໍ່ຫລາຍ ແລະ ເງິນເດືອນຂອງເຂົາເຈົ້າກໍອາດຈະບໍ່ພຽງພໍກັບຄວາມຕ້ອງການ) ຖ້າເຮົາເອົາ ລາຍຈ່າຍທັງຫມົດ ມາລົບ ລາຍໄດ້ທັງຫມົດເຮົາຈະໄດ້ກໍາໄຣຫລືບໍ່ໄດ້ ແລະ ຖ້າໄດ້ຈະໄດ້ຫລາຍປານໃດ [ກໍາ-ໄລ]

ການໄລ່ລາຄາຂາຍ ງ່າຍກວ່າການໄລ່ລາຄາຈ່າຍຫລາຍເທົ່າ ຖ້າຂາຍແພງຫລາຍກໍບໍ່ມີຄົນຊື້ ຖ້າຂາຍຖືກຫລາຍກໍບໍ່ກຸ້ມທຶນ ສລຸບແລ້ວ ຈະຂາຍ ຖືກໂພດ ຫລື ແພງໂພດ ຈະຫລຸບທຶນຫມົດທັງສອງຢ່າງ ເພາະວ່າ ຈະບໍ່ມີ ລາຍໄດ້ ເຂົ້າເຖິງ ຕາມຄາດຫມາຍ [ລາ-ຄາ]

ສໍາລັບການເຮັດແຄນ ສ່ວນມາກ ຜູ້ເຮັດແຄນບໍ່ໄດ້ໄລ່ຄ່າແຮງງານທີ່ຕົນໃຊ້ເວລາເຮັດເວລາທໍາອິກປາການນຶ່ງ ບໍ່ແມ່ນທຸກຄົນ ຈະຮູ້ຈັກວິທີໄລ່ ເຖິງແມ່ນວ່າ ຕົນໄດ້ຮຽນສູງມາແລ້ວກໍດີ

ການໄລ່ ລາຍຈ່າຍ ຕ່າງໆ ທ່ານຕ້ອງຮູ້ຈັກໄລ່ ຄ່າ

- ແຮງງານ ຂອງ ລູກຈ້າງ ທຸກຄົນ ແລະ ຂອງ ຕົນເອງ
- ແຮງງານ ຂອງທຸກຄົນໃນຄອບຄົວ (ໃຫ້ຕຣົງກັບເວລາທີ່ເຂົາໄດ້ລົງມືທໍາງານ ຢ່າງແທ້ຈິງ)
- ໄຟກັບນໍ້າ ແລະ ຄ່າອື່ນໆ ທີ່ໃຊ້ໃນການເຮັດແຄນ ຕາມພາກສ່ວນຂອງເວລາ

- ພາສີອາກອນ ແລະ ດອກເບັ້ຽ ຕ່າງໆ (ຖ້າວ່າ ມີ) [ດອກ-ເບ້ຍ]
- ນັກສໍ້ຣາດບັງຫລວງ [ສໍ້-ລາດ-] (ຖ້າມີການຈ່າຍສຳລັບກໍຣະນີນີ້ ຕ້ອງໄລ່ເຂົ້ານຳກັນ)
- ອື່ນໆອີກ

ຣາຍຈ່າຍ ບາງອັນ ທີ່ເຮົາສາມາດຮູ້ໄດ້ ເປັນຣາຍຈ່າຍປະຈຳປີ ຫລື ເປັນຣາຍເດືອນ ຖ້າຕົກຢູ່ໃນກໍຣະນີນີ້ ໃຫ້ທ່ານໄລ່ເປັນ ຣາຍສັປດາເສັຽກ່ອນ ຈຶ່ງປ່ຽນໄປເປັນ ຣາຍວັນ ຫລື ຣາຍເດືອນ ແລະໃຫ້ຮູ້ວ່າ ປີນຶ່ງມີ ໑໘ ເດືອນ ຫລື ໕໘ ອາທິດ ຊຶ່ງຕາມ ປົກຕິ [ປົກ-ກະ-ຕິ] ເຮົາເຮັດວຽກອາທິດນຶ່ງ ຫ້າມື້ ຫລື ຫົກມື້ ຫລື ເຈັດມື້ ແລະ ມື້ນຶ່ງ ແປດຊົ່ວໂມງ ຢ່າງຕ່ຳສຸດ (ໃຫ້ທ່ານເລືອກຈຳນວນມື້ທຳງານເອົາເອງ ແລະ ເທື່ອຫນ້າຈຶ່ງເວົ້າໃຫ້ລະອຽດກວ່ານີ້) [ເສຍ-ກ່ອນ]

## ການກຳນົດຈຳນວນ

ການສຳເຣັດທຸກຢ່າງຂອງມະນຸດໃນໂລກນີ້ ຂຶ້ນຢູ່ກັບການທີ່ເຮົາຮູ້ຈັກກຳນົດ ບາງຄົນກໍຮູ້ສຶກຕື່ນຕົວຊ້າເກີນໄປໂພດ ບາງຄົນກໍຮູ້ໄດ້ທັນການຍ້ອນການຟັງການໄດ້ຍິນ ອັນທີ່ເຮົາຮຽກກັນອີກຢ່າງນຶ່ງວ່າ ການແລກປ່ຽນ ເຖິງແມ່ນວ່າ ຄວາມເຂົ້າໃຈໃນສິ່ງທີ່ໄດ້ຍິນໄດ້ຟັງມານັ້ນ ຍັງບໍ່ລະອຽດກໍຈິງ ຍ້ອນການເລັ້ມລົງມືຄິດລົງມືເຮັດລົງມືທຳແຕ່ຫົວທີ ເຮົາຈຶ່ງສາມາດແກ້ຄວາມຜິດພາດຂອງເຮົາໄດ້ທັນການ ຖ້າຫາກວ່າ ເຮົາມີເວລານ້ອຍເກີນໄປ ເຖິງຈະເກັ່ງປານໃດ ຄົງຈະແກ້ໄຂໄດ້ຍາກ

ໃນເມື່ອເຮົາຮູ້ ຣາຍຈ່າຍ ຕ່າງໆໄດ້ດີພໍສົມຄວນ ແລະ ເຮົາກໍຮູ້ຈັກ ຣາຄາຂາຍ ສິນຄ້າຕ່າງໆ ຂອງເຮົາຕື່ມອີກ ສິ່ງທີ່ເຮົາຄວນກຳນົດ ຄື ຈຳນວນ ລູກຄ້າ ທີ່ພໍຈະມາຊື້ ສິນຄ້າ ຂອງເຮົາໄດ້ ດັ່ງດຽວກັນກັບການກູ້ຊາດ ເຮົາຕ້ອງຮູ້ຈັກກຳນົດຈຳນວນຄົນທີ່ເປັນໃຈເຮົານຶ່ງ ຈຳນວນຄົນທີ່ຈະເປັນພລັງຕ່າງໆໃນການກູ້ຊາດນຶ່ງ ຈຳນວນສັດຕຣູພ້ອມທັງຄວາມສາມາດແລະຄວາມອ່ອນແອຂອງເຂົາອີກດ້ວຍນຶ່ງ ການຄ້າຂາຍກໍມີພື້ນຖານການກຳນົດແບບດຽວກັນ (ກຳນົດ estimer, déterminer)

Copyright 2008 Phouphetlinthong. Tous droits réservés.

ຈະຜິດ ຫລື ຖືກ ປະການໃດໆ ຂໍໂຈະໄວ້ພຽງເທົ່ານີ້ເສັຽກ່ອນ ເນື່ອງຈາກວ່າ ຂ້າພະເຈົ້າຈະຂຽນໃຫມ່ໃຫ້ລະອຽດດີກວ່ານີ້ ເພື່ອຄົນລາວ ແລະ ເປັນພາສາລາວ ແລະ ພ້ອມດຽວກັນນີ້ ຂ້າພະເຈົ້າກໍຈະຂຽນເປັນພາສາຝຣັ່ງເຫມືອນກັນ ແຕ່ວ່າ ຫນັງສືທີ່ເປັນພາສາຝຣັ່ງຈະມີຄວາມແຕກຕ່າງກັນກັບ ຫນັງສື ທີ່ ເປັນ ພາສາ ລາວ ຍ້ອນຣະດັບຄວາມເຂົ້າໃຈຂອງສັງຄົມທັງສອງນີ້ ແຕກຕ່າງກັນ

ທ່ານມີສິດພິມຫນັງສືນີ້ແຈກຢາຍກັນລ້າໆໄດ້ ຖ້າທ່ານພິມ ທ່ານຕ້ອງພິມຫນັງສືເຫລັ້ມນີ້ທຸກຫນ້າ ແລະ ທ່ານບໍ່ມີສິດພິມພຽງແຕ່ພາກສ່ວນໃດສ່ວນນຶ່ງເທົ່ານັ້ນ ຈະຢູ່ໃນກໍຣະນີໃດກໍຕາມ ທ່ານບໍ່ມີສິດພິມ ຫນັງສື ນີ້ຂາຍ ເພື່ອຊອກຫາກຳໄຣ ຫລື ຕົ້ນທຶນອັນໃດໆກໍຕາມ (ທ່ານຕິດຕໍ່ໄດ້ທີ່ laocom@free.fr)

# ບົມທ໑ກ

1 ເສັ່ຽກ່ອນ [ເສຍ-ກ່ອນ] ການຂຽນທີ່ໃຊ້ຕົວ « ຍ » ເພື່ອງ ແມ່ນຂຽນແບບໂບຮານ ອີກປາການນຶ່ງ ການຂຽນທີ່ໃຊ້ຫນັງສື ທັມ ກໍມີການຂຽນແບບດຽວກັນ ຄື ເ◌ັຽ ໄຫລ້ນນາ ກໍຂຽນແບບດຽວກັນ "ເສັ່ຽກ່ອນ"

2 ຖົ່ວງອກ ຫມາຍເຖິງ ຈໍາພວກ ຫລື ຈໍານວນ ງອກ ທັງຫມົດ ຂອງເພງນຶ່ງ ຂອງລໍາຊນິດໃດຊນິດນຶ່ງໆ ຫລື ຂອງເພງວັກນຶ່ງ ຊຶ່ງ « ງອກ » ແປເປັນພາສາຝຣັ່ງວ່າ ໂນ໋ດ[note] ແລະ « ຖົ່ວງອກ » ຫມາຍເຖິງ ensemble des notes ຫລື partition de musique (music score) ຖ້າເວົ້າແບບຫຍໍ້ໆວ່າ

- Note : ງອກ
- Partition : ຖົ່ວງອກ
- Portée : ຝັກ (ຈະແປເປັນ ຮາງ ຕ້າຍ ຮ້າວ/ຮາວ (ຮາວ) ຫລື ອື່ນໆ ຈັ່ງຄ່ອຍເວົ້າກັນຕາມພາຍຫລັງ ຢ່າງມາຕຖານ)

3 Solfège[ຊອນແຟເຊີ] : ການສຶກສາຫຸກຢ່າງທີ່ພາໃຫ້ເຮົາສາມາດ

- ອ່ານແລະຂຽນ « ງອກ » ພ້ອມດ້ວຍ ຈັງຫວະ
- ເສບເພງຫລືເສບລໍາຕ່າງໆ
- ຫລິ້ນເຄື່ອງດົນຕຣີຊນິດໃດຊນິດນຶ່ງ [ຊະ-ນິດ]
- ຮູ້ຈັກ ຮ້ອງລໍາທໍາເພງ
- ເຮັດອື່ນໆອີກ ກ່ຽວກັບເຣື່ອງນີ້ ຮ້ອງວ່າ Solfège

4 ໂດ ສຽງໃຫຍ່ ຊຶ່ງໃນທີ່ນີ້ ເຮົາຄວນຕີຄວາມຫມາຍໃສ່ ໂດ ໔ (ໂດ ອັນທີສີ່) ຫລື ໂດ ຂອງ octave ອັນ ທີສີ່ ທີ່ຢູ່ເຄິ່ງກາງຂອງ ປີອາໂນ[piano] ໘໘ ລູກ ຖ້າເປັນສຽງຂອງ ປີອາໂນ (ເບິ່ງ ແຜງ ຌ) ສໍາລັບ ພວກ ສະຫະຣັດ ອະເມຣິກາ ຖ້າເປັນຝຣັ່ງແລ້ວ ຕ້ອງແມ່ນ ອັອກຕາວ ອັນທີສາມ ຫລື ໂດ ມີ (ໂດມີ ກັບ ໂດ໔ ດັ່ງກ່າວ ຢູ່ບ່ອນດຽວກັນ ແຕ່ເພິ່ນສົມມຸດການຮ້ອງຕ່າງກັນຊື່ໆ)

ງອກທຸກໆງອກທີ່ຢາຍກັນຢູ່ ຫລັງຈາກ ໂດ ມີ ນີ້ (ກ້ໍາຂວາ) ແມ່ນ ຈໍາພວກ ງອກ ສຽງສູງ ຫລື ສຽງແຫລມ ສ່ວນຈໍາພວກ ງອກ ສຽງທຸ້ມ ຫລື ສຽງຕໍ່າ ແມ່ນ ຈໍາພວກທີ່ຢາຍກັນຢູ່ກ່ອນ ໂດ ມີ ຫລື ຢູ່ກ້ໍາຊ້າຍຂອງ ໂດ ມີ ( ໂດ ໔ ຂອງ ອະເມຣິກາ)

5 ດີອາປາຊົງ[diapason] ເວົ້າຫຍໍ້ໆແລ້ວ ແມ່ນວັດຖຸທີ່ໃຫ້ອອກເປັນສຽງ ລາ ໃນເມື່ອເຮົາຕີມັນຫລືດີດມັນ ເພື່ອໃຫ້ມັນດັງຂຶ້ນ ສຽງຂອງມັນ ຕ້ອງແມ່ນ ສຽງ ລາ[La] ອັນທີສາມ ຄື ໔໔໐ Hz ນັ້ນເອງ ເຄື່ອງວັດຖຸຊນິດນີ້ ໃຊ້ສໍາລັບເຄື່ອງດົນຕຣີທີ່ຜລິດສຽງ ດ້ວຍສາຍ ດັ່ງ ກີຕາຣ໌[guitare] ກະຈັບປີ່ ຊໍ ແລະ ອື່ນໆອີກ ເພື່ອໃຫ້ຜູ່ຫລິ້ນ ສາມາດ ທຽບສຽງໃຫ້ເຂົ້າກັບສຽງ ລາສາມ

6 ເອຊຽນເກມ ສ່ຽງໃຕ້ ຫລື ກີລາ ຂອງກຸ່ມ ອາຊີອາຄະເນ ແມ່ນ ຊີເກມ[SEA game] (« South East Asian game »)

7 (ລາ ສຽງນ້ອຍ ແລະ ລາ ສຽງໃຫຍ່) ລາໃຫຍ່ ໃນທີ່ນີ້ ແມ່ນ ລາ ມີ ຫລື ລາ ຂອງ octave ອັນທີສາມ (ຂອງ ປີອາໂນ[piano] ຖ້າເປັນສຽງຂອງ ປີອາໂນ ທີ່ມີ ໘໘ ດົ໊ວ) ຈາກຊ້າຍມືໄປຫາຂວາມື ຊຶ່ງເປັນ ລາ ທັມມະດາ ແລະ ລານ້ອຍ ນັ້ນ ຕາມທີ່ຈິງແລ້ວ ຕ້ອງແມ່ນ ລາ ໔ ທີ່ມີສຽງສູງກວ່າ ລາ ທັມມະດາ (La 3) ຫລື ລາໃຫຍ່ ຂອງແຄນ octave ນຶ່ງ ຊຶ່ງ octave ມີເຈັດສຽງ ຢູ່ ດ້ວຍກັນ ຄື ໂດ(C) ເຣ(D) ມີ(E) ຟາ(F) ຊອນ(G) ລາ(A) ຊີ(B) ແຕ່ວ່າ ອີງຕາມການແປຄໍາສັບແລ້ວ ແມ່ນ ແປດ (ຖ້າຢາກເຂົ້າໃຈດີກວ່ານີ້ ຕ້ອງເບິ່ງ ຟີສິກ ວິທຍາ ‖ ແປດ = oct[ອັອກຕ] - ບາລີ attha[ອັດຖະ] (ອັຕຖ/ອຕຖ/atth)

ຫມາຍເຫດ : ລາ[La] ໔໔໐ hz ແມ່ນ ລາສາມ ຫລື ລາ ຂອງ « ອັອກຕາວ » ອັນທີສາມ ສໍາລັບປະເທດຝຣັ່ງ ແລະ ສໍາລັບ ສະຫະຣັດ ອະເມຣິກາ ແມ່ນ ລາ_໔ ຫລື ລາ ອັນທີສີ່ ຊຶ່ງໃນປັດຈຸບັນ ເພິ່ນຍ້າຍຈາກ ໔໔໐ ເຫີກ ມາໃສ່ ໔໔໔ ເຫີກ[hertz]

- ສຽງສູງຂອງ ປີອາໂນ ແມ່ນສຽງທີ່ຢູ່ເບື້ອງຂວາມືຫລືກ້ໍາຂວາ ຫລັງຈາກ ໂດ ມີ ຂອງຝຣັ່ງ ຊຶ່ງຄົນລາວມັກເວົ້າກັນວ່າ ສຽງແຫລມ
- ສຽງຕໍ່າ ແມ່ນຈໍາພວກ ສຽງທຸ້ມ ຫລື ສຽງເຖົ້າ ທີ່ຢູ່ກ້ໍາຊ້າຍ ຫລັງຈາກ ໂດ ມີ ຂອງຝຣັ່ງ (ຫລືຫລັງຈາກ ໂດ ໔ ຂອງອະເມຣິກາ)
- ສຽງໃຫຍ່ ຫລື ສຽງທັມມະດາ ແມ່ນ ສຽງກາງ ທີ່ບັນຈຸຢູ່ໃນ ລາຍ ຂອງ ໂດ ມີ ຝຣັ່ງ (ລາຍ=gamme)ຊຶ່ງເປັນ ໂດ "ສຽງກາງ"

ອີງຕາມການວັດແທກໃນຫນັງສືນີ້ (ແຜງ ມີ) « ງອກ » ທີ່ເພິ່ນຄວນຫມາຍໃສ່ດົ໊ວແປດກ້ໍາຊ້າຍແມ່ນ ຊອນ ເບມອນ ($G^b$) ແລະ ກ້ໍາຂວາ ແມ່ນ ລານ້ອຍ[La] ຫລື ລາ ໔ ຝຣັ່ງ ຄື ລາ ໘໘໐ ເຫີກ ຖ້າເປັນ ລາ ກາງຕ້ອງແມ່ນ ໔໔໐ ເຫີກ ‖ ໕໕,໕ ໒໒໑ ໔໔໔ ໘໘໔ ໑໗໖໘ ເຫີກ ຫລື ລາ-໑(໕໕) ລາ໑(໑໑໐) ລາ໒(໒໒໐) ລາມີ(໔໔໐) ລາ໔(໘໘໐) ລາ໕(໑໗໖໐))

# ຮຽນອຢ້າອອຣມກ້ວຍທິມອອງ